ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກຖົ່ວຂຽວ

(ສະບັບທົດລອງ)

ຂຽນໂດຍ : ທ້າວ  ສະຫວັນ  ມູນທາ

ຂໍ້ມູນຈາກ : ບ້ານ ຄົກເພີ້ງ  ເມືອງ  ສັງທອງ   ນະຄອນຫຼວງວຽງຈັນ

ປີ 2006

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com



## ຮູບ ແລະປະຫວັດຂອງຜູ້ຂຽນ

ຊື່ ທ້າວ ສະຫວັນ ນາມສະກຸນ ມູນທາ

ອາຍຸ 34 ປີ

ອາຊີບ ປະຊາຊົນ

## ເຫດຜົນຂອງຜູ້ຂຽນບົດ

ເພື່ອໃຫ້ເດັກນ້ອຍສາມາດອ່ານໃຫ້ເຂົ້າໃຈ ແລະສາມາດໄປນຳໃສ່ຕົວຈິ່ງໄດ້ໃນຊີວິດປະຈຳວັນ

# ປື້ມຄວາມຮູ້ພູມປັນຍາທ້ອງຖິ່ນ
# "ການປູກຖົ່ວຂຽວ"

ແຕ້ມໂດຍ : ທ້າວ

ຮວບຮວມ ແລະຈັດໜ້າໂດຍ : ທ້າວ ສາລີກອນ ບຸດທະນຸວົງ

ຜູ້ຮຽບຮຽງ : ອ.ຈ. ໂພໄຊ ຈັນທະວົງສາ

ອຈ ເກດມະນີ ບັນດາສັກ

ອຈ ພິມມະນີ ສີລີພົງ

ອຈ ຄຳມະນີ ວົງພິມມະຈັນ

ອຈ ທອງຂັນ ສີລີໂພຄຳ

ເຈົ້າຂອງ : ພະແນກສຶກສານະຄອນຫຼວງວຽງຈັນ ແລະ ສູນອົບຮົມຮ່ວມພັດທະນາ

Pestalozzi Children's Foundation

PDF created with pdfFactory Pro trial version www.pdffactory.com

## ຄຳນຳ

ປຶ້ມພູມປັນຍາທ້ອງຖິ່ນຫົວນີ້ໄດ້ມາຈາກການຂຽນຂອງຊາວບ້ານ ແລະອາສາສະໝັກຊຶ່ງໄດ້ຮຽບຮຽງເບື້ອງຕົ້ນຈາກຄະນະອຳນວຍການສູນອົບຮົມຮ່ວມພັດທະນາ ແລະພະແນກສຶກສານະຄອນຫລວງວຽງຈັນ.

ປຶ້ມຫົວນ້ອຍຫົວນີ້ໄດ້ບັນຈຸເອົາເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດໜຶ່ງໂດຍມີຫລາຍກິດຈະກຳທີ່ຈະເປັນການທົດລອງເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາ ແລະສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນ ປໍ 1 ປໍ 2 ແລະບົດທີ່ຍາກກໍສອນຊັ້ນໃຫຍ່ຂຶ້ນໄປ.

ຄະນະຈັດທຳຄິດວ່າປຶ້ມຫົວນີ້ຄົງເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກທີ່ຈະໄປສອນເດັກປະຖົມບໍ່ຫລາຍກໍໜ້ອຍ.

ຄະນະຈັດທຳຄິດວ່າຍັງມີຫລາຍເນື້ອໃນທີ່ຍັງບໍ່ທັນພຽງພໍ ແລະຂາດໄປ ຫວັງວ່າຄົງໄດ້ຮັບການຕິຊົມຈາກທຸກທ່ານ ພວກເຮົາພ້ອມທີ່ຈະປັບປຸງຕາມຄວາມເໝາະສົມ.

ຄະນະຈັດທຳ

## ເກມ: ຖົ່ວຂຽວ

**ຈຸດປະສົງ:**

1. ເພື່ອໃຫ້ທຸກຄົນອອກກຳລັງກາຍ
2. ເພື່ອໃຫ້ເດັກນ້ອຍມີຄວາມສາມັກຄີ

ສະຖານທີ່: ເດີ່ນກ້ວາງ

ເວລາ: 10 ນາທີ

ຈຳນວນຜູ້ຫຼິ້ນ: 10 ຂຶ້ນໄປ

ອຸປະກອນ: ຄົນ

**ວິທີການຫຼິ້ນ:**

1. ໃຫ້ແຕ່ລະຄົນຢືນເປັນວົງມົນ
2. ວິທະຍາກອນອະທິບາຍ:

- ຖ້າວິທະຍາກອນບອກວ່າ: “ຖົ່ວຂຽວ” ໃຫ້ທຸກຄົນແລ່ນອ້ອມວົງມົນໄວໆ
- ຖ້າວິທະຍາກອນບອກວ່າ: “ຖົ່ວແດງ” ໃຫ້ທຸກຄົນຢຸດ
- ຖ້າວິທະຍາກອນບອກວ່າ: “ຖົ່ວເຫຼືອງ” ໃຫ້ທຸກຄົນແລ່ນແບບຊ້າໆ
- ຖ້າຜູ້ໃດຕຳໝູ່ໃຫ້ຜູ້ນັ້ນເຂົ້າມາໃນວົງ ແລະ ວິທະຍາກອນກໍຈະມີລາງວັນໃຫ້
- ສາມາດຫຼິ້ນໄດ້ຫລາຍຄັ້ງ

PDF created with pdfFactory Pro trial version www.pdffactory.com

## ລຳ: ຖົ່ວຂຽວ

ຫຼາຍປີຜ່ນພົ້ນ ຕະກຸນຖົ່ວມີມາ
ຊາວປະຊາທັງຫຼາຍ ຮັ່ງມີນໍດີໃຈ
ໃຜບໍ່ກຽດຄ້ານ ໃນການອອກແຮງງານ
ຕ້ອງປະສົມປະສານ ການປູກໝາກຖົ່ວ
ຢູ່ໃນທົ່ວເຂດ ເມືອງສັງທອງເຮົາ
ຫັນມາເອົາຖົ່ວ ຜະລິດເປັນສິນຄ້າ
ທຸກທົ່ວໜ້າ ປູກໄດ້ສູ່ຄົນທ່ານເອີຍ

**ຄຳຖາມທ້າຍບົດ**

1. ການປູກຖົ່ວຂຽວຕ້ອງໃຊ້ເວລາດົນປານໃດເຮົາຈຶ່ງເກັບກູ້ໄດ້ ?
2. ການກຽມໜານປູກຖົ່ວຂຽວປະມານຈັກມື້ເຮົາຈຶ່ງສາມາດຫວານຖົ່ວຂຽວໄດ້ ?

**ບົດເລກ:**

ອາຈານ ຕຸ່ນມີສ່ວນຖົ່ວຂຽວ 2 ໜານ ແຕ່ລະໜານມີຖົ່ວຂຽວ 5 ຕົ້ນໆລະ 5 ໝາກ. ລາວໄດ້ເກັບເອົາໝາກຖົ່ວຂຽວຢູ່ໜານທີ 1 ຈຳນວນ 3 ຕົ້ນ ແລະ ໜານທີ 2 ຈຳນວນ 2 ຕົ້ນ. ຖາມວ່າ: ອາຈານ ຕຸ່ນ ເກັບໝາກຖົ່ວຂຽວໄດ້ທັງໝົດຈັກໝາກ?

## ຄວາມເປັນມາ ( ການປູກຖົ່ວຂຽວ)

ຖົ່ວຂຽວເປັນພືດຊະນິດໜຶ່ງທີ່ເຮົາບໍ່ຮູ້ວ່າປູກມາໃນສະໄໝໃດຜ່ານມາ ແຕ່ໃນປະຈຸບັນນີ້ພໍ່ແມ່ປະຊາຊົນຊາວບ້ານຄຶກເພີງຂອງພວກເຮົາເຄີຍປູກເຄີຍຫວ່ານເຄີຍເຮັດສືບທອດຕໍ່ກັນມາແຕ່ຫລາຍຍຸກຫລາຍສະໄໝມາແລ້ວທັງເປັນອາຊີບເສີມ ແລະມີລາຍໄດ້ໃຫ້ແກ່ປະຊາຊົນພາຍໃນບ້ານຫຼັງຈາກທີ່ສຳເລັດການເກັບກູ້ເຂົ້າ ແລະມັນກໍເປັນຖົ່ວຊະນິດໜຶ່ງທີ່ປະຊາຊົນນຳມາປຸງແຕ່ງອາຫານຢູ່ພາຍໃນຄອບຄົວ.

## ລະດູການປູກຖົ່ວຂຽວ

ລະດູການປູກຖົ່ວຂຽວມີ 2 ລະດູການຄື:

1. ລະດູຝົນ: ເລີ່ມແຕ່ເດືອນກັນຍາ ຫາ ເດືອນຕຸລາ
2. ລະດູແລ້ງ: ເລີ່ມແຕ່ເດືອນທັນວາ ຫາ ເດືອນມັງກອນ

## ອຸປະກອນ

ພ້າ



ແນວພັນ

PDF created with pdfFactory Pro trial version www.pdffactory.com

ສະຖານທີ່ປູກ

ເຊືອກ

ໄມ້ຄັນລຸ້ງ

## ວິທີ ແລະຂັ້ນຕອນການປູກ

ຫລັງຈາກປັກດຳນາປີແລ້ວຊ່ວງເດືອນ 9 -10 ເຮົາຕ້ອງກະກຽມລົງມືຖາງປ່າຕາມຄວາມເໝາະສົມ

### ເຊີ້ງ:ການປູກຖົ່ວຂຽວ

ເອີຍໝູ່ເອີຍໝູ່ ຮີບພາກັນມາ
ພາກັນສ້າງສາ ມາປູກຖົ່ວຂຽວ
ປູກເປັນໜຶ່ງດຽວ ກໍໄດ້ກິນໂລດ
ຄຸນປະໂຫຍດ ຕະກຸນຖົ່ວມີມາ
ພວກຊາວປະຊາ ຂະຫຍັນຂັນສູ້
ໃຫ້ທຸກຄົນຮູ້ ເປັນອາຊີບເສີມ
ພ້ອມກັນດຳເນີນ ຫລາຍຍຸກສະໄໝ
ໃຜກໍອາໄສ ຖົ່ວຂຽວດີແທ້

### ເພງ:ຖົ່ວຂຽວ

**Y**ປູກຖົ່ວງາມ ຄືປູກຖົ່ວຂຽວ
ປູກບິດດຽວ ກໍໄດ້ກິນເລີຍ
ພວກເຮົາ ຢ່າມົວເມີຍເສີຍ (ຊ້ຳ)
ມາຊ່ວຍກັນເລີຍ ອອກແຮງງານນຳກັນ
**Y**ປະສົມປະສານ ກັນພູມປັນຍາທ້ອງຖິ່ນ
ທຸກທົ່ວແດນດິນ ບໍ່ອຶດເຂົ້າອຶດປາ
ບໍ່ມີບັນຫາ ເສດຖະກິດບ້ານນາ
ຢູ່ຄູ່ກັນມາ ກັບບ້ານເຮົາແທ້ນໍ

PDF created with pdfFactory Pro trial version www.pdffactory.com

**ຫຼັກການທີ່ສຳຄັນ**

ຕ້ອງເລືອກແນວປູກທີ່ດີ ແລະ ຫາເນື້ອທີ່ບ່ອນທີ່ເໝາະສົມ ຜົນຜະລິດຈິ່ງຈະໄດ້ຮັບຜົນດີ.

**ຄຸນປະໂຫຍດ**

- ໃຊ້ໃນການປຸງແຕ່ງອາຫານ
- ສ້າງລາຍໄດ້ໃຫ້ແກ່ຄອບຄົວ

## ກາບ: ຖົ່ວງາມ

| | |
|---|---|
| ຖົ່ວຊຽວນີ້ | ມີດີຫລາຍຢ່າງ |
| ໃຜກໍຊ່າງ | ເຮັດໄດ້ສະບາຍ |
| ເອົາໄປຂາຍ | ຕາມຫ້ອງຕະຫລາດ |
| ບໍ່ໄດ້ຂາດ | ເປັນອາຊີບເສີມ |
| ການລິເລີ່ມ | ຂອງທ້າວຄຳພົ້ວ |
| ຕະກຸນຖົ່ວ | ມີຫຼຸກຂົງເຂດ |
| ແຕ່ປະເພດ | ຕະກຸນງາມໆ |
| ມີຢູ່ຕາມ | ເມືອງສັງທອງເຮົາ |

ຕ້ອງເບັ່ງເຊືອກຕາມໜ້າດິນໃຫ້ເປັນແຖວຊື່

ໃຊ້ໄມ້ແຫຼມ ຫຼື ໄມ້ຄັນລຸ້ງສັກຕາມແລວຂອງເຊືອກທີ່ເບັ່ງໄວ້ ໃຫ້ເປັນຂຸມເລິກປະມານ 2 ຂໍ້ມື ແລະຫ່າງກັນປະມານ 25 ຫາ 30 ຊັງຕີແມັດ

ແລ້ວເຮົາກໍນຳແກ່ນຖົ່ວມາປ່ອນລົງໃສ່ຂຸມ 2 – 3 ແກ່ນຕໍ່ຂຸມ

PDF created with pdfFactory Pro trial version www.pdffactory.com

ຈາກນັ້ນກໍອັດຂຸມໄວ້ເພື່ອປ້ອງກັນບໍ່ໃຫ້ແມງໄມ້ ແລະສັດຂ້ວດກິນ

ຫລັງຈາກນັ້ນປະມານ 1 ເດືອນ ຫາ 2 ເດືອນຖົ່ວກໍກາຍເປັນໝາກຖົ່ວ.

ຕໍ່ມາອີກ 1 ເດືອນຖົ່ວກໍແກ່ເປັນໜ່ວຍດຳແລ້ວກໍເກັບ ຫຼື ກ່ຽວເອົາມາຕີກໍສຳເລັດ, ເອົາເປືອກອອກຍັງເຫຼືອແຕ່ແກ່ນ

<u>**ວິທີບົວລະບັດຮັກສາ**</u>

ເຮົາຕ້ອງລ້ອມຮົ້ວໃຫ້ແໜ້ນດີເພື່ອບໍ່ໃຫ້ສັດເຂົ້າມາທຳລາຍ

ຫຼັງຈາກເບ້ຍອ່ອນແຕກອອກມມາແລ້ວໃຫ້ສີດຢາໃສ່ເພື່ອກັນບໍ່ໃຫ້ບົ້ງ ຫຼື ແມງໄມ້ມາກັດ.

ຫຼັງຈາກນັ້ນກໍນຳເອົາຝຸ່ນມາໃສ່ເພື່ອໃຫ້ໝາກ ແລະແກ່ນຂອງມັນງອກງາມດີ.

PDF created with pdfFactory Pro trial version www.pdffactory.com